| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ການອະນຸຍາດສົ່ງຕົວຢ່າງແຮ່ທາດໄປວິໄຈ-ທົດລອງ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoEM-GMD-17 | 21.09.2017 | ກົມທໍລະນີສາດ ແລະ ແຮ່ທາດ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | B - ອຸດສາຫະກໍາບໍ່ແຮ່ ແລະ ການຂຸດຄົ້ນ |
| ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ | ໃນໄລຍະການຊອກຄົ້ນ-ສໍາຫລວດແຮ່ທາດ, ໂດຍຫລັກການແລ້ວ ຜູ້ລົງທຶນບໍ່ມີສິດທີ່ຈະນໍາເອົາ ແຮ່ທາດ ໃນພື້ນທີ່ດັ່ງກ່າວ ໄປໃຊ້ປະໂຫຍດ ຫລື ອອກນອກພື້ນທີ່ຊອກຄົ້ນ-ສໍາຫລວດໄດ້, ການກໍານົດໃຫ້ຕ້ອງມີການຂໍອະນຸຍາດກ່ອນການສົ່ງອອກແຮ່ທາດດັ່ງກ່າວ ແມ່ນເພື່ອຈໍາກັດໃຫ້ການສົ່ງອອກແຮ່ທາດໃນພື້ນທີ່ດັ່ງກ່າວ ດໍາເນີນການໄປໃນປະລິມານທີ່ຈໍາກັດ ຢ່າງເໝາະສົມ ເພື່ອບໍ່ໃຫ້ມີການລັກລອບຂຸດຄົ້ນແຮ່ທາດໄປ ໂດຍບໍ່ໄດ້ຮັບສິດສໍາປະທານ ແລະ ໃບອະນຸຍາດຂຸດຄົ້ນ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫລື ນິຕິບຸກຄົນ ທີ່ມີວັດຖຸປະສົງສົ່ງອອກແຮ່ທາດ ເພື່ອການວິໄຈ ແລະ ທົດລອງ ທັງຢູ່ພາຍໃນ ແລະ/ຫລື ສົ່ງໄປວິໄຈ-ທົດລອງຢູ່ຕ່າງປະເທດ ໃນຊ່ວງໄລຍະຊອກຄົ້ນ-ສໍາຫລວດແຮ່ທາດ ຈົນຮອດໄລຍະເລີ່ມຕົ້ນຂອງການຂຸດຄົ້ນບໍ່ແຮ່ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | 1. ກ່ອນທີ່ຈະສົ່ງຕົວຢ່າງແຮ່ທາດໄປວິໄຈ-ທົດລອງ, ຕົວຢ່າງດັ່ງກ່າວ ຕ້ອງຖືກກວດສອບຈາກ ຄະນະວິຊາການທີ່ກ່ຽວຂ້ອງ ຂອງກົມທໍລະນີສາດ ແລະ ແຮ່ທາດ ແລະ/ຫລື ພະແນກການຂອງອົງການປົກຄອງທ້ອງຖິ່ນທີ່ເຮັດວຽກຄຸ້ມຄອງ, ກວດກາ ແລະ ຕິດຕາມຂະບວນການວິໄຈ-ທົດລອງແຮ່ທາດ 2. ຕ້ອງນໍາຜົນວິໄຈ-ທົດລອງ ມາໃຫ້ກົມທໍລະນີສາດ |

| ຂໍ້ມູນພື້ນຖານ | |
|---|---|
| | ແລະ ແຮ່ທາດ ຄົ້ນຄວ້າ, ກວດກາ, ລຽບລຽງ ແລະ ພິຈາລະນາຮັບຮອງເອົາ 3. ຕ້ອງຂໍວິຊາການຂອງກົມທໍລະນີສາດ ແລະ ແຮ່ທາດ ຢ່າງໜ້ອຍ 1 ຄົນໄປສົມທົບກັບ ພະນັກງານຢູ່ທ້ອງຖິ່ນ ຢ່າງໜ້ອຍ 1 ຄົນ ກວດກາ, ເບິ່ງປະເພດ, ຈໍານວນຂອງຕົວຢ່າງດ້ວຍ ໂດຍຜູ້ຂໍອະນຸຍາດຕ້ອງຮັບຜິດຊອບຄ່າໃຊ້ຈ່າຍຂອງພະນັກງານທັງສອງ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ | 5 | |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ການສົ່ງຕົວຢ່າງໄປວິໄຈ-ທົດລອງ ຕ້ອງສົ່ງເຂົ້າ ຫ້ອງວິໄຈ-ທົດລອງຂອງກົມທໍລະນີສາດ ແລະ ແຮ່ທາດ ຫລື ສູນວິໄຈ-ທົດລອງແຮ່ທາດ ທີ່ກະຊວງຮັບຮອງກ່ອນ ແລະ ຫາກ ຫ້ອງວິໄຈ ຫລື ສູນວິໄຈດັ່ງກ່າວ ບໍ່ສາມາດຕອບສະໜອງໄດ້ ຈຶ່ງຈະໄປທົດລອງ ຫລື ວິໄຈຢູ່ສະຖານທີ່ອື່ນໄດ້ ໂດຍຜ່ານການພິຈາລະນາຂອງກົມທໍລະນີສາດ ແລະ ແຮ່ທາດ 2. ປະລິມານຕົວຢ່າງແຮ່ທາດທີ່ສົ່ງໄປວິໄຈ-ທົດລອງ ຕ້ອງເປັນໄປຕາມຫລັກເກນ ແລະ ຂໍ້ກໍານົດ ທີ່ລະບຸໄວ້ ສໍາລັບ ແຕ່ລະປະເພດຂອງແຮ່ທາດ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ປະຕິເສດໃນກໍລະນີທີ່ການຂໍອະນຸຍາດດັ່ງກ່າວ ບໍ່ເປັນໄປຕາມເງື່ອນໄຂ ແລະ ຂໍ້ຈໍາກັດ ໂດຍສະເພາະ ໃນສ່ວນຂອງປະລິມານ ທີ່ກໍານົດໄວ້ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ບໍ່ມີ | 0 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ | |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລື | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າແບບຟອມ | ຄ່າໃຊ້ຈ່າຍທັງໝົດ |

| ຄ່າທໍານຽມ | | | | |
|---|---|---|---|---|
| ບໍ່? | | | ຄໍາຮ້ອງ | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| ຄໍາເຫັນ | | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| ຄໍາເຫັນ | | | | |

| ນິຕິກໍາທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ນິຕິກໍາ | ເລກທີ | ວັນທີ | ຄໍາເຫັນ |
| ກົດໝາຍວ່າດ້ວຍ ແຮ່ທາດ (ສະບັບປັບປຸງ) | 02/ສພຊ | 26.12.2011 | ມາດຕາ 39 ການສົ່ງຕົວຢ່າງແຮ່ທາດໄປວິໄຈ<br>ມາດຕາ 43 ການສົ່ງຕົວຢ່າງແຮ່ທາດ ເພື່ອຄັດເລືອກເຕັກໂນໂລຊີອອກແບບໂຮງງານ |
| ລະບຽບ ວ່າດ້ວຍ ການສົ່ງຕົວຢ່າງແຮ່ທາດໄປວິໄຈ-ທົດລອງ | 7883/ກຊສ | 13.11.2012 | |

| ເອກະສານປະກອບ |
|---|
| ຊື່ເອກະສານ |
| ແຜນການສົ່ງແຮ່ທາດ ເພື່ອການວິໄຈ-ທົດລອງ |
| ໃບຢັ້ງຢືນຮັບຮອງບົດວິພາກເສດຖະກິດ-ເຕັກນິກເບື້ອງຕົ້ນ ສໍາລັບ ໂຄງການຂຸດຄົ້ນບໍ່ແຮ່ |
| ໃບອະນຸຍາດສໍາຫລວດແຮ່ທາດ |
| ໃບອະນຸຍາດຂຸດຄົ້ນແຮ່ທາດ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | | |